ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0435 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 30 ມີນາ 2023

# ຂໍ້ຕົກລົງ
# ວ່າດ້ວຍແບບອຸດສາຫະກຳ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 0298/ກຊປ.ອຄ, ລົງວັນທີ 10 ມີນາ 2023.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ ເປັນຕົ້ນ ການຈົດທະບຽນ, ການດຳເນີນການຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ ແລະ ອື່ນໆການຄຸ້ມຄອງວຽກງານແບບອຸດສາຫະກຳ ເພື່ອແນໃສ່ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ແບບອຸດສາຫະກຳ**

ແບບອຸດສາຫະກຳ ແມ່ນຮູບແບບ, ຮູບຮ່າງ ຫຼື ຮູບຊົງ ພາຍນອກຂອງຜະລິດຕະພັນທີ່ສ້າງຂຶ້ນທີ່ປະກອບດ້ວຍ ຮູບຮ່າງ, ລວດລາຍ, ເສັ້ນສາຍ, ສີສັນ ແລະ ອື່ນໆ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງ ຂໍຈົດທະບຽນແບບອຸດສາຫະກຳ, ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້ ແລະ ການສະເໜີອື່ນໆ ກ່ຽວກັບ ແບບອຸດສາຫະກຳ; ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;

2. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານ ກ່ຽວກັບການຂໍຈົດທະບຽນແບບອຸດສາຫະກຳ, ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້ ແລະ ການສະເໜີອື່ນໆ ກ່ຽວກັບແບບອຸດສາຫະກຳ;

3. **ໝວດ** ໝາຍເຖິງ ການຈັດໝວດຂອງສາກົນ ກ່ຽວກັບປະເພດຂອງແບບອຸດສາຫະກຳ ຕາມການຈັດໝວດໂລກາໂນ (Locarno Classification) ສຳລັບການຈົດທະບຽນແບບອຸດສາຫະກຳ;

4. **ນັກອອກແບບ** ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ຮ່ວມກັນອອກແບບຜະລິດຕະພັນໃດໜຶ່ງ;

5. **ການແຍກຄຳຮ້ອງ** ໝາຍເຖິງ ການແຍກຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳດຽວອອກເປັນສອງ ຫຼື ຫຼາຍສະບັບ ໂດຍຜູ້ຮ້ອງຂໍ ຊຶ່ງແຕ່ລະຄຳຮ້ອງທີ່ໄດ້ແຍກມານັ້ນ ຕ້ອງກ່ຽວຂ້ອງກັບແບບອຸດສາຫະກຳທີ່ຢູ່ໃນຄຳຮ້ອງຕົ້ນສະບັບ;

6. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕາມກົດໝາຍ ຕໍ່ກັບແບບອຸດສາຫະກຳ ຫຼື ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;

7. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;

8. **ຜູ້ມອບສິດ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງແບບອຸດສາຫະກຳ ທີ່ມອບສິດຂອງຕົນໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;

9. **ຜູ້ຕາງໜ້າ** ໝາຍເຖິງ ທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບມອບສິດຈາກເຈົ້າຂອງແບບ ໃນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫຼື ດຳເນີນການອື່ນ;

10. **ວັນບຸລິມະສິດ** ໝາຍເຖິງ ວັນທີ່ຜູ້ຮ້ອງຂໍໄດ້ຍື່ນຂໍຈົດທະບຽນ ຢູ່ຕ່າງປະເທດ, ຢູ່ສຳນັກງານອື່ນ ຫຼື ຢູ່ ສປປ ລາວ ຊຶ່ງມີຜົນໃຊ້ໄດ້ກ່ອນໜ້ານີ້;

11. **ການຄັດຄ້ານ** ໝາຍເຖິງ ການຍື່ນຄຳສະເໜີຂໍຄັດຄ້ານໂດຍຜູ້ຄັດຄ້ານ ຕໍ່ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ພົວພັນກັບວຽກງານແບບອຸດສາຫະກຳ ຢູ່ ສປປ ລາວ.

## ໝວດທີ 2
## ການຈົດທະບຽນແບບອຸດສາຫະກຳ

**ມາດຕາ 5 ເງື່ອນໄຂທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ**

ແບບທີ່ສາມາດໄດ້ຮັບໃບຢັ້ງຢືນແບບອຸດສາຫະກຳ ມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຕ້ອງເປັນແບບໃໝ່ ຊຶ່ງບໍ່ເຄີຍຖືກເປີດເຜີຍ ສູ່ສາທາລະນະຊົນມາກ່ອນ ດ້ວຍອາລະສານ ຫຼື ດ້ວຍການນຳໃຊ້ຕົວຈິງ ຫຼື ດ້ວຍການວາງສະແດງ ຫຼື ດ້ວຍຮູບການອື່ນ ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກກ່ອນວັນຍື່ນຄຳຮ້ອງ ຫຼື ກ່ອນວັນບູລິມະສິດ ຂອງຄຳຮ້ອງຂໍຈົດທະບຽນ;

2. ຕ້ອງເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸທີ່ນຳເອົາແບບໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸເອງເກີດມີຮູບຊົງພາຍນອກພິເສດ.

ສຳລັບແບບທີ່ບໍ່ສາມາດໄດ້ຮັບການຈົດທະບຽນ ແມ່ນໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ນອກນັ້ນ, ລັກສະນະທາງດ້ານເຕັກນິກທີ່ກ່ຽວຂ້ອງກັບແບບອຸດສາຫະກຳ ເຊັ່ນ: ວັດສະດຸທີ່ນຳໃຊ້, ວິທີການຜະລິດ ຫຼື ການປະຕິບັດງານ ແມ່ນບໍ່ສາມາດໄດ້ຮັບການປົກປ້ອງເປັນແບບອຸດສາຫະກຳ.

**ມາດຕາ 6 ຂັ້ນຕອນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ**

ຜູ້ຮ້ອງຂໍ ສາມາດຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ຕາມແບບພິມຂອງ ກົມຊັບສິນທາງປັນຍາ ໂດຍປະຕິບັດຕາມເງື່ອນໄຂຕໍ່າສຸດ ທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງລຸ່ມນີ້:

1. ຮັບຄຳຮ້ອງ, ໃຫ້ເລກທີ ແລະ ວັນທີຍື່ນຄຳຮ້ອງ ແລະ ອອກໃບຮັບເງິນ ໃນກໍລະນີຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ ຕາມທີ່ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

2. ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕ້ອງສະໜອງເອກະສານເພີ່ມເຕີມ ຫຼື ດັດແກ້ໃຫ້ໄດ້ຕາມເງື່ອນໄຂຄົບຖ້ວນຕາມທີ່ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ຫົກສິບ ວັນນັບແຕ່ວັນອອກແຈ້ງການເປັນຕົ້ນໄປ; ຖ້າບໍ່ດັ່ງນັ້ນ, ໃຫ້ຖືວ່າສະຫຼະສິດ;

3. ສົ່ງສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ຄົບຖ້ວນຕາມເງື່ອນໄຂທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ໃຫ້ກົມຊັບສິນທາງປັນຍາເພື່ອດຳເນີນການຕາມຂັ້ນຕອນຕໍ່ໄປ;

4. ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນ ຫາກມີຈຸດປະສົງຂໍຖອນຄຳຮ້ອງ ຫຼື ຄຳຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຈ່າຍໄປແລ້ວ;

5. ໃນກໍລະນີ ວັນສຸດທ້າຍຂອງວັນບູລິມະສິດ ແມ່ນວັນພັກທາງລັດຖະການ ຫຼື ເປັນວັນທີ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບໍ່ເປີດຮັບຄຳຮ້ອງ, ພະແນກຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປຈົນເຖິງວັນລັດຖະການທຳອິດຖັດໄປ. ໃນກໍລະນີ ຄຳຮ້ອງຂໍຈົດທະບຽນ ໄດ້ລະບຸວັນບູລິມະສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງມີໄລຍະເວລາຂໍຮັບວັນບູລິມະສິດສຳລັບແບບອຸດສາຫະກຳ ແມ່ນ ຫົກ ເດືອນ ນັບແຕ່ວັນທີໄດ້ຮັບວັນບູລິມະສິດເປັນຕົ້ນໄປ.

**ມາດຕາ 7 ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ**

ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ປະກອບມີເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕາມແບບພິມຂອງກົມຊັບສິນທາງປັນຍາ;

2. ໃບມອບສິດຕົ້ນສະບັບ; ໃນກໍລະນີຍື່ນພາຍຫຼັງວັນທີຍື່ນຄຳຮ້ອງ ຕ້ອງຄັດຕິດສຳເນົາໃບຢັ້ງຢືນການຮັບຄຳຮ້ອງທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ;

3. ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ທີ່ບົ່ງບອກເຖິງແບບອຸດສາຫະກຳຢ່າງຈະແຈ້ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

4. ບົດອະທິບາຍໂດຍ ສັງເຂບ ຫຼື ຫຍໍ້ ກ່ຽວກັບແບບອຸດສາຫະກຳ ແລະ ການນຳໃຊ້ແບບດັ່ງກ່າວທີ່ກ່ຽວຂ້ອງກັບຜະລິດຕະພັນ ຫຼື ສິນຄ້າ;

5. ໜັງສືຢັ້ງຢືນ ກ່ຽວກັບການຖືສິດ ຂອງຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ (Letter of Assignment/ Deed of Assignment) ໃນກໍລະນີຜູ້ຮ້ອງຂໍທີ່ບໍ່ແມ່ນ ຜູ້ອອກແບບອຸດສາຫະກຳເອງ;

6. ໃບຮັບເງິນ ຄ່າທຳນຽມ ແລະ ຄ່າບໍລິການ.

ສຳລັບສຳເນົາ ຫຼື ເອກະສານຢັ້ງຢືນວັນບຸລິມະສິດ (ຖ້າມີ) ແລະ ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ແລະ ເອກະສານຄັດຕິດອື່ນໆ ທີ່ຍື່ນເປັນພາສາອັງກິດ, ຕ້ອງແປເປັນພາສາລາວ (ຍົກເວັ້ນ ຊື່, ທີ່ຢູ່ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ຄຳສັບທາງດ້ານວິຊາການ) ພາຍໃນ ເກົ້າສິບ ວັນ ຫຼັງຈາກທີ່ໄດ້ຍື່ນຄຳຮ້ອງ ຊຶ່ງການແປດັ່ງກ່າວ ຕ້ອງໄດ້ຮັບການຢັ້ງຢືນຈາກບໍລິສັດແປພາສາ ທີ່ຖືກຕ້ອງຕາມກົດໝາຍ. ຖ້າບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ ຄຳຮ້ອງຈະບໍ່ຖືກນຳມາພິຈາລະນາ ແລະ ຖືວ່າສະຫຼະສິດ.

**ມາດຕາ 8 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ**

ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ຈະໄດ້ຮັບວັນທີຍື່ນຄຳຮ້ອງຕາມເງື່ອນໄຂຕໍ່າສຸດ ຕ້ອງປະກອບດ້ວຍເອກະສານຢ່າງໜ້ອຍທີ່ສຸດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 3 ແລະ 6 ຂອງ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ພ້ອມທັງການລະບຸໝວດຜະລິດຕະພັນ ຫຼື ສິນຄ້າ ທີ່ຂໍການປົກປ້ອງດັ່ງກ່າວ ໃຫ້ຖືກຕ້ອງຕາມການຈັດໝວດສາກົນ.

**ມາດຕາ 9 ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ (Model)**

ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ຕ້ອງສະແດງໃຫ້ເຫັນແບບອຸດສາຫະກຳຢ່າງຈະແຈ້ງ ເພື່ອຊີ້ໃຫ້ເຫັນຄວາມກ່ຽວຂ້ອງກັນຂອງຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຮູບຊົງ, ລວມທັງ ການນຳໃຊ້ແບບອຸດສາຫະກຳດັ່ງກ່າວ.

ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ຕ້ອງສະແດງໃຫ້ເຫັນລາຍລະອຽດຂອງທຸກມູມຕາມຄວາມຈຳເປັນ ເພື່ອສາມາດລະບຸລັກສະນະຂອງແບບອຸດສາຫະກຳດັ່ງກ່າວ, ໂດຍຕ້ອງສະແດງໃຫ້ເຫັນຢ່າງໜ້ອຍ 7 ມູມ ທີ່ແຕກຕ່າງກັນ ຄື: ໜ້າ, ຫຼັງ, ເທິງ, ລຸ່ມ, ຂ້າງຊ້າຍ, ຂ້າງຂວາ ແລະ ຮູບລວມ. ສຳລັບແບບອຸດສາຫະກຳທີ່ເປັນຊຸດ ຕ້ອງປະກອບມີ 7 ຮູບຂອງມູມທີ່ແຕກຕ່າງກັນຂອງແຕ່ລະອັນ ທີ່ປະກອບຢູ່ໃນຊຸດດັ່ງກ່າວ;

ໃນກໍລະນີ ແບບອຸດສາຫະກຳ ເປັນແບບສອງມິຕິ ສາມາດສະໜອງຕົວແບບເພີ່ມຕື່ມ ທີ່ສາມາດຈຳແນກໄດ້ລັກສະນະທີ່ແຕກຕ່າງກັນຂອງແບບອຸດສາຫະກຳ ຊຶ່ງຕົວແບບດັ່ງກ່າວ ຕ້ອງມີຂະໜາດບໍ່ເກີນ 20 x 20 x 20 ຊັງຕີແມັດ.

ໃນກໍລະນີ ແບບອຸດສາຫະກໍາ ເປັນແບບສາມມິຕິ ຕ້ອງປະກອບມີຮູບພາບໂດຍລວມ ແລະ ຮູບພາບເພີ່ມຕື່ມອື່ນໆທີ່ຈໍາເປັນ ເພື່ອສາມາດຈໍາແນກໄດ້ລັກສະນະທີ່ແຕກຕ່າງກັນຂອງແບບອຸດສາຫະກໍາ.

ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຕ້ອງບໍ່ລວມເອົາວັດຖຸອື່ນ ຊຶ່ງບໍ່ແມ່ນອົງປະກອບຂອງແບບອຸດສາຫະກໍາ ຫຼື ພາກສ່ວນຂອງຜະລິດຕະພັນທີ່ບໍ່ກ່ຽວຂ້ອງກັບແບບອຸດສາຫະກໍາ.

ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຕ້ອງເຮັດໃນຮູບແບບເອເລັກໂຕຣນິກ ຫຼື ໃນຮູບແບບເຈ້ຍທີ່ມີຄຸນນະພາບ (ບໍ່ເຫຼື້ອມ), ມີຄວາມລະອຽດ, ຈະແຈ້ງ ແລະ ຊັດເຈນ ໂດຍສະແດງໃຫ້ເຫັນແບບອຸດສາຫະກໍາຢ່າງຈະແຈ້ງ. ບັນດາເສັ້ນສາຍ ຫຼື ລວດລາຍ ຕ້ອງມີຄວາມຈະແຈ້ງ, ເຂັ້ມ ແລະ ມີຂະໜາດບໍ່ເກີນ 20 x 28 ຊັງຕີແມັດ ແລະ ບໍ່ໃຫ້ນ້ອຍກວ່າ 14 x 20 ຊັງຕີແມັດ ຕໍ່ໜຶ່ງຮູບ.

**ມາດຕາ 10 ບົດອະທິບາຍໂດຍສັງເຂບ**

ບົດອະທິບາຍຂອງແບບອຸດສາຫະກໍາ ຕ້ອງອະທິບາຍໃຫ້ເຫັນໂດຍສັງເຂບ ກ່ຽວກັບທຸກສ່ວນປະກອບທີ່ບົ່ງບອກ ເຖິງລັກສະນະສະເພາະຂອງການອອກແບບຢ່າງຊັດເຈນ, ຄວາມໃໝ່ (novelty) ທີ່ແຕກຕ່າງຈາກແບບອຸດສາຫະກໍາທີ່ມີມາກ່ອນແລ້ວ ໂດຍສອດຄ່ອງກັບ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ທີ່ຄັດຕິດໃນສໍານວນຄໍາຮ້ອງ ແລະ ລະບຸກ່ຽວກັບ ການນໍາໃຊ້ກັບຜະລິດຕະພັນ ຫຼື ເປັນສິນຄ້າໃດໜຶ່ງ.

ແບບອຸດສາຫະກໍາ ທີ່ເປັນສິ່ງປະດັບ (ornamental) ຕ້ອງອະທິບາຍໃຫ້ເຫັນຄວາມກ່ຽວຂ້ອງ ຂອງແບບວັດຖຸ ທີ່ຈະນໍາເອົາໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸນັ້ນເອງ ຊຶ່ງເຮັດໃຫ້ເກີດມີຮູບຊົງພາຍນອກພິເສດທີ່ແຕກຕ່າງຈາກແບບເດີມ.

ແບບອຸດສາຫະກໍາ ທີ່ເປັນ ຊຸດຜະລິດຕະພັນ ຫຼື ສິນຄ້າ, ຕ້ອງອະທິບາຍໃຫ້ເຫັນເຖິງລັກສະນະຂອງແຕ່ລະອັນຂອງຊຸດຜະລິດຕະພັນ ຫຼື ສິນຄ້ານັ້ນ ຢ່າງຊັດເຈນ.

**ມາດຕາ 11 ການຈັດໝວດສາກົນກ່ຽວກັບແບບອຸດສາຫະກໍາ**

ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງລະບຸໝວດ ຕາມການຈັດໝວດແບບຂອງສາກົນສໍາລັບຜະລິດຕະພັນ ຫຼື ສິນຄ້າ (Locarno Classification) ທີ່ມີການປ່ຽນແປງເປັນແຕ່ລະໄລຍະ ຊຶ່ງກໍາລັງນໍາໃຊ້ໃນເວລາຍື່ນຄໍາຮ້ອງ ສໍາລັບໝວດຂອງປະເພດແບບອຸດສາຫະກໍາຂອງຜະລິດຕະພັນ ຫຼື ສິນຄ້າ ທີ່ກ່ຽວຂ້ອງກັບແບບອຸດສາຫະກໍາເທົ່ານັ້ນ.

ໃນກໍລະນີ ການຈັດໝວດສາກົນ ຫາກມີການປ່ຽນແປງໃນລະຫວ່າງການດໍາເນີນການພິຈາລະນາຄໍາຮ້ອງ, ກົມຊັບສິນທາງປັນຍາ ຕ້ອງແຈ້ງຜ່ານພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃຫ້ຜູ້ຮ້ອງຂໍຊາບ ເພື່ອດັດແກ້ຄໍາຮ້ອງ ໂດຍລະບຸໝວດ (Class) ແລະ ລາຍການຍ່ອຍ (Sub-class) ຂອງຜະລິດຕະພັນ ຫຼື ສິນຄ້າໃຫ້ຖືກຕ້ອງ.

**ມາດຕາ 12 ຫຼັກການພິຈາລະນາຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ**

ການພິຈາລະນາຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງປະຕິບັດຕາມຫຼັກການ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 28 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ໃນກໍລະນີ ມີການຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫຼາຍສະບັບ ພາຍໃນໄລຍະດຽວກັນ ທີ່ເປັນແບບດຽວກັນ ຫຼື ຄ້າຍຄືກັນ ຊຶ່ງສໍາລັບປະເພດແບບອຸດສາຫະກໍາດຽວກັນ ຫຼື ຄ້າຍຄືກັນນັ້ນ ໃຫ້ພິຈາລະນາຄໍາຮ້ອງທີ່ມີວັນບຸລິມະສິດກ່ອນ.

ໃນກໍລະນີ ກົມຊັບສິນທາງປັນຍາໄດ້ດໍາເນີນຕາມຂັ້ນຕອນການພິຈາລະນາຄໍາຮ້ອງແລ້ວ ໃຫ້ຈົດທະບຽນຄໍາຮ້ອງທີ່ໄດ້ຮັບວັນບູລິມະສິດກ່ອນ, ພ້ອມທັງອອກໜັງສືແຈ້ງປະຕິເສດ ຄໍາຮ້ອງທີ່ໄດ້ຮັບວັນບູລິມະສິດຕາມຫຼັງ. ໃນກໍລະນີ ການພິຈາລະນາຄໍາຮ້ອງທີ່ໄດ້ຮັບວັນບູລິມະສິດຕາມຫຼັງນັ້ນ ຫາກສໍາເລັດກ່ອນ ແລະ ຄໍາຮ້ອງດັ່ງກ່າວ ມີເງື່ອນໄຂໃນການໄດ້ຮັບການຈົດທະບຽນ, ກົມຊັບສິນທາງປັນຍາ ຕ້ອງໂຈະການພິຈາລະນາຄໍາຮ້ອງດັ່ງກ່າວນັ້ນໄວ້ກ່ອນ ຈົນກວ່າການພິຈາລະນາຄໍາຮ້ອງທີ່ໄດ້ຮັບວັນບູລິມະສິດກ່ອນນັ້ນຈະສິ້ນສຸດລົງ.

ກົມຊັບສິນທາງປັນຍາ ຈະບໍ່ໃຫ້ຄໍາປຶກສາທາງດ້ານກົດໝາຍ ແລະ ບໍ່ໃຫ້ຄໍາແນະນໍາກ່ຽວກັບຄວາມເປັນໄປໄດ້ວ່າ ແບບອຸດສາຫະກໍາ ນັ້ນສອດຄ່ອງຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້, ແຕ່ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ສາມາດຍື່ນຄໍາຮ້ອງຂໍຄົ້ນຫາ ແບບອຸດສາຫະກໍາ ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອໃຫ້ຮູ້ວ່າແບບອຸດສາຫະກໍາທີ່ຂໍຄົ້ນຫານັ້ນ ໄດ້ຈົດທະບຽນແລ້ວ ຫຼື ບໍ່ ໂດຍຕ້ອງລະບຸໝວດຂອງປະເພດແບບອຸດສາຫະກໍາທີ່ຕ້ອງການຄົ້ນຫາພ້ອມທັງຈ່າຍຄ່າບໍລິການ ຫຼື ສາມາດຄົ້ນຫາຂໍ້ມູນດັ່ງກ່າວໄດ້ທີ່ ລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາ ຂອງກົມຊັບສິນທາງປັນຍາ.

ຜົນຂອງການຄົ້ນຫາ ແບບອຸດສາຫະກໍາ ເປັນພຽງແຕ່ການກວດຄົ້ນຫາຂໍ້ມູນ ກ່ຽວກັບແບບອຸດສາຫະກໍາຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ໃນເບື້ອງຕົ້ນເທົ່ານັ້ນ, ແຕ່ບໍ່ໝາຍວ່າ ແບບດັ່ງກ່າວ ຈະສາມາດຈົດທະບຽນໄດ້ ເພາະຍັງຕ້ອງມີການກວດຄົ້ນຢູ່ໃນລະບົບຖານຂໍ້ມູນຂອງສາກົນ ຕື່ມອີກ.

**ມາດຕາ 13 ການກວດສອບເບື້ອງຕົ້ນ**

ພາຍຫຼັງ ໄດ້ຮັບຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາແລ້ວ ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເບື້ອງຕົ້ນ ກ່ຽວກັບຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ຄວາມສອດຄ່ອງຂອງສໍານວນຄໍາຮ້ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 32 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 5, 7, 9, 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້. ການກວດສອບເບື້ອງຕົ້ນ ຕ້ອງໃຫ້ສໍາເລັດ ພາຍໃນ ສິບ ວັນ ນັບແຕ່ວັນຮັບສໍານວນຄໍາຮ້ອງຄົບຖ້ວນເປັນຕົ້ນໄປ.

ໃນກໍລະນີ ສໍານວນຄໍາຮ້ອງຫາກ ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 9 ແລະ 10 ຂອງຂໍ້ຕົກລົງສະບັບນີ້, ກົມຊັບສິນທາງປັນຍາ ຕ້ອງແຈ້ງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ ເພື່ອແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ພາຍໃນ ສາມ ວັນ, ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງສະໜອງເອກະສານ ຫຼື ດັດແກ້ ໃຫ້ໄດ້ຕາມເງື່ອນໄຂດັ່ງກ່າວ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນ ຫາກບໍ່ສາມາດປະຕິບັດພາຍໃນກໍານົດເວລາດັ່ງກ່າວ, ກົມຊັບສິນທາງປັນຍາ ຕ້ອງແຈ້ງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງເປັນລາຍລັກອັກສອນ ຫຼື ແຈ້ງຜ່ານທາງເອເລັກໂຕຣນິກ ໃຫ້ຜູ້ກ່ຽວຊາບວ່າຄໍາຮ້ອງດັ່ງກ່າວຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ.

ໃນກໍລະນີ ສໍານວນຄໍາຮ້ອງ ຫາກສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນ, ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄໍາຮ້ອງດັ່ງກ່າວລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 14 ການເຜີຍແຜ່ຄໍາຮ້ອງ ແລະ ການສະເໜີຂໍຄັດຄ້ານ**

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ພາຍຫຼັງສໍາເລັດການກວດສອບເບື້ອງຕົ້ນ ພາຍໃນ ສິບຫ້າ ວັນ, ການເຜີຍແຜ່ ສໍານວນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງປະກອບມີຂໍ້ມູນ ດັ່ງລຸ່ມນີ້:

1. ຫົວຂໍ້ຂອງແບບອຸດສາຫະກໍາ;
2. ຮູບຂອງແບບອຸດສາຫະກໍາ;
3. ໝວດ ຂອງແບບອຸດສາຫະກໍາ;
4. ເລກທີ ແລະ ວັນທີຍື່ນຄໍາຮ້ອງ;
5. ຊື່ ແລະ ທີ່ຢູ່ຂອງຜູ້ຍື່ນຄໍາຮ້ອງ.

ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ມີຈຸດປະສົງ ບໍ່ໃຫ້ເປີດເຜີຍຮູບຂອງແບບອຸດສາຫະກໍາ ຕໍ່ສາທາລະນະຊົນ, ຜູ້ຮ້ອງຂໍ ຕ້ອງສະເໜີເປັນລາຍລັກອັກສອນໃນເວລາຍື່ນຄໍາຮ້ອງ ເພື່ອຂໍເລື່ອນເວລາການເປີດເຜີຍ ຮູບຂອງແບບອຸດສາຫະກໍາ ເຊັ່ນ: ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ພາຍໃນໄລຍະເວລາບໍ່ເກີນ ສິບແປດ ເດືອນ ນັບຈາກວັນທີພິມເຜີຍແຜ່ຄໍາຮ້ອງ ຫຼື ນັບຈາກວັນບູລິມະສິດ (ຖ້າມີ) ເປັນຕົ້ນໄປ ແລະ ຕ້ອງຈ່າຍ ຄ່າທໍານຽມ ແລະ ຄ່າບໍລິການ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄໍາຮ້ອງດັ່ງກ່າວ ຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ພາຍໃນ ຫົກສິບ ວັນ ນັບແຕ່ວັນທີທີ່ໄດ້ເຜີຍແຜ່ລົງໃນ ຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ໂດຍປະກອບຕາມແບບພິມຂອງກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ພ້ອມທັງຈ່າຍຄ່າບໍລິການ. ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ , ນະຄອນຫຼວງ ຕ້ອງສົ່ງຄໍາຮ້ອງຂໍຄັດຄ້ານດັ່ງກ່າວ ໃຫ້ກົມຊັບສິນທາງປັນຍາເພື່ອດໍາເນີນການຕາມຂັ້ນຕອນຕໍ່ໄປ.

**ມາດຕາ 15 ການກວດສອບເນື້ອໃນ**

ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເນື້ອໃນ ໂດຍອີງຕາມລະບົບຖານຂໍ້ມູນຂອງກົມຊັບສິນທາງປັນຍາ (IPAS) ແລະ ສາກົນ (WIPO Global Design Data Base) ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 40 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເພື່ອພິຈາລະນາຄໍາຮ້ອງນັ້ນໃຫ້ສອດຄ່ອງກັບເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ແລະ ມາດຕາ 22 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການ ໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາຊາບ ກ່ຽວກັບການປະຕິເສດເບື້ອງຕົ້ນການຈົດທະບຽນແບບອຸດສາຫະກໍາ ໃນກໍລະນີສໍານວນຄໍາຮ້ອງດັ່ງກ່າວຫາກບໍ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນ, ໂດຍຜ່ານພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ.

ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງສະໜອງເອກະສານ, ຂໍ້ມູນ, ຫຼັກຖານ, ຫຼື ຄໍາຊີ້ແຈງ ຫຼື ຄໍາໂຕ້ແຍ້ງ ໃຫ້ກົມຊັບສິນທາງປັນຍາໂດຍຜ່ານ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ພາຍໃນ ຫົກສິບ ວັນ ນັບແຕ່ວັນອອກແຈ້ງການປະຕິເສດເບື້ອງຕົ້ນ. ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ມີເຫດຜົນພຽງພໍ ໂດຍແຈ້ງເປັນລາຍລັກອັກສອນ, ກົມຊັບສິນທາງປັນຍາ ສາມາດຕໍ່ເວລາໃຫ້ຕື່ມອີກ ສາມສິບ ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທໍາອິດເປັນຕົ້ນໄປ; ຖ້າບໍ່ດັ່ງນັ້ນ, ໃຫ້ຖືວ່າສະຫຼະສິດ.

ໃນກໍລະນີ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຫາກມີວັດຖຸອື່ນປະກອບຢູ່ນໍາ ກົມຊັບສິນທາງປັນຍາ ຕ້ອງແຈ້ງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຢັ້ງຢືນວ່າ ວັດຖຸດັ່ງກ່າວ ເປັນພາກສ່ວນໜຶ່ງຂອງແບບອຸດສາຫະກໍາ ຫຼື ເປັນພາກສ່ວນອື່ນ. ໃນກໍລະນີ ກົມຊັບສິນທາງປັນຍາ ຫາກກວດສອບແລ້ວເຫັນວ່າ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ທີ່ຢູ່ໃນສໍານວນຄໍາຮ້ອງ ບໍ່ມີຄວາມກ່ຽວຂ້ອງ ຫຼື ບໍ່ແມ່ນອົງປະກອບຂອງແບບທີ່ຍື່ນຂໍຈົດທະບຽນ, ກົມຊັບສິນທາງປັນຍາຕ້ອງແຈ້ງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ສະໜອງຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຄືນໃໝ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ກົມຊັບສິນທາງປັນຍາເຫັນວ່າ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ປະກອບມີຮູບຮ່າງພາຍນອກຂອງແບບອຸດສາຫະກໍາ ທີ່ບໍ່ສາມາດເຂົ້າໃຈໄດ້ ກົມຕ້ອງແຈ້ງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນສະໜອງ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບໃໝ່ ທີ່ສາມາດເຂົ້າໃຈໄດ້ ແລະ ຊັດເຈນຂຶ້ນ.

### ມາດຕາ 16 ການປະເມີນຄວາມໃໝ່ (Novelty)

ການປະເມີນຄວາມໃໝ່ຂອງແບບອຸດສາຫະກໍາ ກົມຊັບສິນທາງປັນຍາ ຕ້ອງສົມທຽບແບບທີ່ຢູ່ໃນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ກັບຂໍ້ມູນທີ່ມີການເຜີຍແຜ່ກ່ອນໜ້າ ແລະ ຂໍ້ມູນການຈົດທະບຽນ ທີ່ມີຢູ່ໃນ ສປປ ລາວ ແລະ ຕ່າງປະເທດ ພ້ອມທັງຂໍ້ມູນອື່ນໆທີ່ໄດ້ເຜີຍແຜ່ສູ່ສາທາລະນະ.

ໃນກໍລະນີເຫັນວ່າ ແບບອຸດສາຫະກໍາ ທີ່ກໍາລັງພິຈາລະນາຢູ່ນັ້ນ ຄືກັນກັບແບບອຸດສາຫະກໍາທີ່ໄດ້ຖືກເປີດເຜີຍມາກ່ອນແລ້ວ ຈະຖືວ່າບໍ່ເປັນສິ່ງໃໝ່.

ການດໍາເນີນການຕໍ່ໄປນີ້ ຢູ່ແຫ່ງໃດໜຶ່ງໃນໂລກ ຈະຖືວ່າເປັນການເປີດເຜີຍ ແບບອຸດສາຫະກໍາ:

1. ໄດ້ຮັບການຈົດທະບຽນ;
2. ເຜີຍແຜ່ ຫຼື ສາມາດກວດຄົ້ນແບບອຸດສາຫະກໍາດັ່ງກ່າວ;
3. ເຜີຍແຜ່ໃນ ວາລະສານ, ສື່ໂຄສະນາ-ການຕະຫຼາດ ຫຼື ບົດຂຽນຕ່າງໆ;
4. ການສະແຫວງຫາຜົນປະໂຫຍດທາງການຄ້າຈາກ ແບບອຸດສາຫະກໍາ ຫຼື ວັດຖຸທີ່ນໍາໃຊ້ກັບແບບດັ່ງກ່າວ ຫຼື ປະກອບມີແບບອຸດສາຫະກໍາດັ່ງກ່າວ.

ໃນກໍລະນີຍົກເວັ້ນ, ການຕິດຕໍ່ພົວພັນ ຫຼື ການສົ່ງຂໍ້ມູນ ກ່ຽວກັບແບບອຸດສາຫະກໍາ ຈະບໍ່ຖືວ່າເປັນການເປີດເຜີຍຕໍ່ສາທາລະນະຊົນ ຖ້າຫາກວ່າ ການຕິດຕໍ່ພົວພັນດັ່ງກ່າວ ແມ່ນການກະທໍາພາຍໃຕ້ຂໍ້ສັນຍາ ຫຼື ຢູ່ໃນເງື່ອນໄຂທີ່ບໍ່ມີເຈດຕະນາ ນໍາໄປສູ່ການເປີດເຜີຍຂໍ້ມູນດັ່ງກ່າວຕໍ່ສາທາລະນະຊົນ. ການຕິດຕໍ່ພົວພັນດັ່ງລຸ່ມນີ້ ຈະບໍ່ຖືວ່າ ເປັນການເປີດເຜີຍຕໍ່ສາທາລະນະຊົນ:

1. ພາຍໃຕ້ ຂໍ້ສັນຍາວ່າດ້ວຍການຮັກສາຄວາມລັບ ທີ່ເປັນລາຍລັກອັກສອນ;
2. ພາຍໃນ ອົງກອນ ຫຼື ວິສາຫະກິດ ທີ່ເປັນຜູ້ຖືສິດ;
3. ພາຍໃນ ຄອບຄົວ, ວົງສາຄະນາຍາດ ຫຼື ບຸກຄົນຮູ້ຈັກທີ່ຖືກແຕ່ງຕັ້ງ;
4. ຕໍ່ກັບທະນາຍຄວາມ ຫຼື ຕົວແທນ;
5. ຕໍ່ກັບຜູ້ທີ່ຈະໄດ້ຮັບສິດຕໍ່ແບບອຸດສາຫະກໍາ ທີ່ບໍ່ທັນໄດ້ນໍາໄປໃຊ້ໃນທາງການຄ້າ.

ໃນກໍລະນີ ກົມຊັບສິນທາງປັນຍາ ຫາກມີຄວາມສົງໄສ ກ່ຽວກັບຄວາມໃໝ່ຂອງແບບອຸດສາຫະກໍາ ສາມາດແຈ້ງໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ສະໜອງຄໍາຊີ້ແຈງ ເພື່ອອະທິບາຍກ່ຽວກັບທຸກການເປີດເຜີຍ ຫຼື ການຕິດຕໍ່ພົວພັນຕ່າງໆໄດ້.

ສໍາລັບຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ທີ່ຮຽກຮ້ອງວັນບູລິມະສິດ ພາຍໃຕ້ສົນທິສັນຍາສາກົນ, ກົມຊັບສິນທາງປັນຍາ ສາມາດຮັບຮອງເອົາຜົນຂອງການກວດສອບຄວາມໃໝ່ ຂອງແບບອຸດສາຫະກໍາ ໂດຍໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 17 ການປະເມີນວ່າ ເປັນສິ່ງປະດັບ ຫຼື ລັກສະນະທາງດ້ານເຕັກນິກ**

ແບບອຸດສາຫະກໍາຕ້ອງເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸທີ່ນໍາໃຊ້ກັບແບບອຸດສາຫະກໍາ ຫຼື ປະກອບມີແບບອຸດສາຫະກໍາຢູ່ນໍານັ້ນ ມີຮູບຊົງພາຍນອກທີ່ພິເສດ. ເງື່ອນໄຂຂອງການເປັນສິ່ງປະດັບ ຕ້ອງຖືກປະເມີນບົນພື້ນຖານຮູບຊົງພາຍນອກໂດຍລວມຂອງແບບອຸດສາຫະກໍາ ໂດຍຄໍານຶງເຖິງ ຮູບຮ່າງ, ເສັ້ນສາຍ, ສີສັນ ຫຼື ອົງປະກອບອື່ນໆທີ່ປະກອບສ່ວນເຂົ້າໃນຮູບຊົງພາຍນອກໂດຍລວມຂອງແບບອຸດສາຫະກໍາ.

ເຖິງແມ່ນວ່າວັດຖຸ ມີຮູບຊົງພາຍນອກທີ່ໂດດເດັ່ນ, ແຕ່ອາດຈະບໍ່ສາມາດເປັນສິ່ງປະດັບໄດ້ ຖ້າວ່າຮູບຊົງພາຍນອກດັ່ງກ່າວ ສະແດງອອກເຖິງ ລັກສະນະທາງດ້ານເຕັກນິກຂອງການປະດິດສ້າງ. ກໍລະນີ ທີ່ແບບອຸດສາຫະກໍາ ສະແດງອອກເຖິງລັກສະນະດັ່ງກ່າວ ຕ້ອງຖືກປະຕິເສດການຈົດທະບຽນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 22 ຂໍ້ທີ 1 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 18 ການດັດແກ້ຄໍາຮ້ອງ**

ໃນໄລຍະການກວດສອບ ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ສາມາດດັດແກ້ຄໍາຮ້ອງໄດ້, ແຕ່ຕ້ອງດໍາເນີນການກ່ອນໜ້າການ ຈົດທະບຽນ, ສະຫຼະສິດ, ປະຕິເສດ ຫຼື ການສິ້ນສຸດການພິຈາລະນາອື່ນຂອງຄໍາຮ້ອງດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ຊຶ່ງການດັດແກ້ຄໍາຮ້ອງນັ້ນ ຕ້ອງບໍ່ໃຫ້ເພີ່ມແບບ, ໝວດຂອງປະເພດ ຫຼື ປ່ຽນແປງລັກສະນະຕົ້ນຕໍຂອງແບບ ທີ່ຢູ່ໃນສໍານວນຄໍາຮ້ອງເບື້ອງຕົ້ນ.

**ມາດຕາ 19 ການແຍກຄໍາຮ້ອງ**

ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາໃດໜຶ່ງ ສາມາດແຍກອອກເປັນ ສອງ ຫຼື ຫຼາຍສະບັບໄດ້ ໂດຍຕ້ອງຍື່ນໃບສະເໜີຂໍແຍກກ່ອນໜ້າການ ຈົດທະບຽນ, ສະຫຼະສິດ, ປະຕິເສດ ຫຼື ການສິ້ນສຸດການພິຈາລະນາອື່ນຂອງຄໍາຮ້ອງດັ່ງກ່າວ.

ຄໍາຮ້ອງຂໍຈົດທະບຽນທີ່ຖືກແຍກອອກມານັ້ນ ຕ້ອງມີການອ້າງອີງໃສ່ຄໍາຮ້ອງເບື້ອງຕົ້ນ ເພື່ອໃຫ້ຮູ້ວ່າໄດ້ແຍກອອກມາຈາກຄໍາຮ້ອງໃດ ແລະ ໃຊ້ເປັນວັນບູລິມະສິດ ໂດຍຕ້ອງລະບຸ ເລກທີ ແລະ ວັນທີຍື່ນຄໍາຮ້ອງເບື້ອງຕົ້ນ ໃສ່ຄໍາຮ້ອງທີ່ຖືກແຍກແຕ່ລະສະບັບ. ສໍາລັບຄໍາຮ້ອງເບື້ອງຕົ້ນນັ້ນ ຕ້ອງມີການດັດແກ້ ໂດຍຮັກສາໄວ້ພຽງແຕ່ໝວດຂອງປະເພດແບບອຸດສາຫະກໍາທີ່ຍັງເຫຼືອ. ຄໍາຮ້ອງທີ່ແຍກອອກມານັ້ນ ຕ້ອງຍື່ນພ້ອມກັບຄໍາຮ້ອງເບື້ອງຕົ້ນທີ່ໄດ້ຖືກດັດແກ້ແລ້ວ ຊຶ່ງຕ້ອງໄດ້ຮັບເລກທີ ແລະ ວັນທີຍື່ນໃໝ່ ຕາມວັນທີທີ່ຍື່ນຄໍາຮ້ອງຂໍແຍກ ແລະ ຕ້ອງຈ່າຍ ຄ່າທໍານຽມ ແລະ ຄ່າບໍລິການ ຕາມແຕ່ລະສະບັບທີ່ໄດ້ແຍກອອກ ຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 20 ການຈົດທະບຽນແບບອຸດສາຫະກໍາ**

ກົມຊັບສິນທາງປັນຍາ ຕ້ອງອອກໃບຢັ້ງຢືນການຈົດທະບຽນແບບອຸດສາຫະກໍາ, ບັນທຶກຂໍ້ມູນທີ່ກ່ຽວຂ້ອງລົງໃນປຶ້ມບັນທຶກການຈົດທະບຽນ ແລະ ລະບົບຖານຂໍ້ມູນຂອງກົມຊັບສິນທາງປັນຍາ ໃນເມື່ອສໍານວນຄໍາຮ້ອງສອດຄ່ອງຕາມເງື່ອນໄຂການຈົດທະບຽນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 21 ການເຜີຍແຜ່ຜົນຂອງການຈົດທະບຽນແບບອຸດສາຫະກຳ**

ພາຍຫຼັງການຈົດທະບຽນແບບອຸດສາຫະກຳແລ້ວ ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຈົດທະບຽນດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດສະເໜີເຖິງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອໃຫ້ກົມຊັບສິນທາງປັນຍາ ເຜີຍແຜ່ຜົນຂອງການຈົດທະບຽນຄືນໃໝ່ ພ້ອມດ້ວຍຂໍ້ມູນທີ່ຖືກດັດແກ້ ໂດຍບໍ່ຕ້ອງຈ່າຍຄ່າບໍລິການ ໃນກໍລະນີ ການເຜີຍແຜ່ຫາກມີຂໍ້ຜິດພາດ ແລະ ຕ້ອງຍື່ນຄຳຮ້ອງ ພາຍໃນ ຫົກສິບ ວັນ ນັບແຕ່ວັນເຜີຍແຜ່ຄັ້ງທຳອິດ.

## ໝວດທີ 3
## ການດຳເນີນການ ຫຼັງການຈົດທະບຽນແບບອຸດສາຫະກຳ

**ມາດຕາ 22 ການປ່ຽນແປງຂໍ້ມູນ ຫຼັງການຈົດທະບຽນແບບອຸດສາຫະກຳ**

ເຈົ້າຂອງແບບອຸດສາຫະກຳ ສາມາດຍື່ນຄຳຮ້ອງຢູ່ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອປ່ຽນແປງຂໍ້ມູນ ກ່ຽວກັບ ຊື່ ແລະ/ຫຼື ທີ່ຢູ່ ຂອງເຈົ້າຂອງແບບອຸດສາຫະກຳ ຫຼື ຜູ້ຕາງໜ້າ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 23 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ**

ເຈົ້າຂອງແບບອຸດສາຫະກຳ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳໄດ້ ເພື່ອນຳໃຊ້ເປັນຫຼັກຖານ ໃນການດຳເນີນຄະດີຢູ່ສານປະຊາຊົນ, ການຈົດທະບຽນແບບອຸດສາຫະກຳ ຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນ ຫຼື ຕໍ່ອາຍຸ ທີ່ເສຍຫາຍ ຫຼື ຊອກບໍ່ເຫັນ ຊຶ່ງເຈົ້າຂອງແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນ ຢູ່ນຳກົມຊັບສິນທາງປັນຍາ ຕ້ອງຍື່ນຄຳຮ້ອງ ຢູ່ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຫຼື ນະຄອນຫຼວງ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 24 ການດັດແກ້ພາຍຫຼັງການຈົດທະບຽນ**

ພາຍຫຼັງແບບອຸດສາຫະກຳ ໄດ້ຮັບການຈົດທະບຽນແລ້ວ, ເຈົ້າຂອງແບບອຸດສາຫະກຳ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນຢູ່ໃນເອກະສານ ກ່ຽວກັບການຈົດທະບຽນສຳລັບບາງລາຍການໃນໝວດອຸດສາຫະກຳ ທີ່ໄດ້ຈົດທະບຽນ, ຂໍສະຫຼະສິດຕໍ່ບາງສ່ວນຂອງແບບອຸດສາຫະກຳ, ຂໍດັດແກ້ບາງຂໍ້ຜິດພາດໃນສຳນວນຄຳຮ້ອງຂໍຈົດທະບຽນ ຫຼື ດັດແກ້ຕົວຢ່າງຂອງແບບອຸດສາຫະກຳ ໂດຍຍື່ນຄຳຮ້ອງຢູ່ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ພ້ອມທັງຈ່າຍຄ່າບໍລິການ, ຊຶ່ງການດັດແກ້ດັ່ງກ່າວ ແມ່ນອະນຸຍາດໃຫ້ດັດແກ້ໄດ້ພຽງເລັກນ້ອຍເທົ່ານັ້ນ ໂດຍບໍ່ປ່ຽນແປງລັກສະນະຕົ້ນຕໍຂອງແບບອຸດສາຫະກຳ.

ໃນກໍລະນີ ການດັດແກ້ໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳທີ່ມີຂໍ້ຜິດພາດ ຊຶ່ງເກີດຈາກກົມຊັບສິນທາງປັນຍາ ແມ່ນຜູ້ຮ້ອງຂໍຈະບໍ່ໄດ້ຈ່າຍຄ່າບໍລິການ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນກ່ຽວກັບການດັດແກ້ດັ່ງກ່າວລົງໃນຈົດໝາຍເຫດທາງລັດຖະການ.

**ມາດຕາ 25 ການຍົກເລີກແບບອຸດສາຫະກຳ ອີງຕາມຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ເຮັດໃຫ້ເຂົ້າໃຈຜິດ**

ໃນກໍລະນີກົມຊັບສິນທາງປັນຍາເຫັນວ່າ ແບບອຸດສາຫະກຳ ທີ່ໄດ້ອອກໄປແລ້ວນັ້ນ ເປັນຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ເຮັດໃຫ້ເຂົ້າໃຈຜິດຢູ່ໃນສຳນວນຄຳຮ້ອງ, ປິດບັງຂໍ້ມູນ ຫຼື ມີການກະທຳໃດໜຶ່ງທີ່ລະເມີດ ຫຼື ສອດຄ່ອງກັບນິຕິກຳ ແລະ ກົດໝາຍ, ຊຶ່ງຖ້າຂໍ້ມູນດັ່ງກ່າວມີມູນຄວາມຈິງ ກົມຊັບສິນທາງປັນຍາ ຕ້ອງດຳເນີນຂັ້ນຕອນການຍົກເລີກທາງດ້ານບໍລິຫານ ແລະ ຕ້ອງແຈ້ງໃຫ້ເຈົ້າຂອງແບບອຸດສາຫະກຳ ຮັບຊາບ.

ຖ້າຫາກວ່າເຈົ້າຂອງແບບອຸດສາຫະກຳ ບໍ່ເຫັນດີຕໍ່ກັບແຈ້ງການດັ່ງກ່າວ ສາມາດສະເໜີຂໍພິຈາລະນາທາງດ້ານບໍລິຫານ ຢູ່ກົມຊັບສິນທາງປັນຍາ ຫຼື ສານປະຊາຊົນ.

**ມາດຕາ 26 ອາຍຸການປົກປ້ອງ**

ແບບອຸດສາຫະກຳ ມີອາຍຸການປົກປ້ອງ ສິບຫ້າ ປີ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ. ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງແບບອຸດສາຫະກຳຕ້ອງຈ່າຍ ຄ່າທຳນຽມ ແລະ ຄ່າບໍລິການ ລ່ວງໜ້າເທື່ອລະ ຫ້າ ປີ.

**ມາດຕາ 27 ການຮັກສາອາຍຸການປົກປ້ອງ**

ແບບອຸດສາຫະກຳ ທີ່ໄດ້ຈົດທະບຽນແລ້ວ ແມ່ນມີອາຍຸການປົກປ້ອງເບື້ອງຕົ້ນ ຫ້າ ປີ , ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງແບບອຸດສາຫະກຳ ສາມາດຂໍຮັກສາອາຍຸການປົກປ້ອງໄດ້ 2 ເທື່ອ, ເທື່ອລະ ຫ້າ ປີ ໂດຍຍື່ນຄຳຮ້ອງຂໍຕໍ່ອາຍຸການປົກປ້ອງ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຊຶ່ງການຍື່ນຄຳຮ້ອງຂໍຕໍ່ອາຍຸດັ່ງກ່າວ ຕ້ອງຍື່ນພາຍໃນ ຫົກ ເດືອນ ກ່ອນວັນສິ້ນສຸດອາຍຸການປົກປ້ອງ.

ໃນກໍລະນີ ການປົກປ້ອງແບບອຸດສາຫະກຳ ຫາກໝົດອາຍຸ ແຕ່ຍັງບໍ່ທັນໄດ້ຍື່ນຄຳຮ້ອງຂໍຕໍ່ອາຍຸ ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດຍື່ນຄຳຮ້ອງຂໍຕໍ່ອາຍຸການຈົດທະບຽນໄດ້ ແຕ່ຕ້ອງຍື່ນພາຍໃນ ຫົກ ເດືອນ ນັບແຕ່ວັນສິ້ນສຸດອາຍຸການປົກປ້ອງດັ່ງກ່າວ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບການຮັກສາອາຍຸການປົກປ້ອງ ແຕ່ຕ້ອງໄດ້ຈ່າຍຄ່າປັບໄໝສຳລັບຄວາມລ່າຊ້າດັ່ງກ່າວ.

ໃນກໍລະນີ ມື້ສຸດທ້າຍຂອງອາຍຸການປົກປ້ອງແບບອຸດສາຫະກຳ ຫາກແມ່ນວັນພັກທາງລັດຖະການ ຫຼື ເປັນວັນທີ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບໍ່ເປີດຮັບຄຳຮ້ອງ, ວັນທີຮັບຄຳຮ້ອງຕ້ອງຕໍ່ເວລາອອກໄປຈົນເຖິງ ວັນລັດຖະການທຳອິດຖັດໄປ.

ແບບອຸດສາຫະກຳ ທີ່ບໍ່ມີການຂໍຮັກສາອາຍຸການປົກປ້ອງ ຫຼື ສິ້ນສຸດອາຍຸການປົກປ້ອງ ຈະຖືວ່າເປັນຊັບສິນທາງປັນຍາຂອງສາທາລະນະຊົນ.

**ມາດຕາ 28 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ**

ເຈົ້າຂອງແບບອຸດສາຫະກຳ ສາມາດໂອນສິດຂອງຕົນ ບາງສ່ວນ ຫຼື ທັງໝົດ ໂດຍເຮັດເປັນລາຍລັກອັກສອນ ເຊັ່ນ: ການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ໃນກໍລະນີ ມີການໂອນສິດຕໍ່ແບບອຸດສາຫະກຳ ທີ່ໄດ້ຮັບການຈົດທະບຽນ, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດ ຕ້ອງແຈ້ງກ່ຽວກັບການໂອນສິດດັ່ງກ່າວຕາມແບບພິມຂອງກົມຊັບສິນທາງປັນຍາ ຜ່ານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງຊາບ ເພື່ອສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງຮັບຮູ້ກ່ຽວກັບການໂອນສິດດັ່ງກ່າວ ເປັນລາຍລັກອັກສອນ ໃຫ້ແກ່ຜູ້ຮັບໂອນສິດ ແລະ ບັນທຶກການໂອນສິດເຂົ້າໃນລະບົບຖານຂໍ້ມູນຊັບສິນທາງປັນຍາ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ. ຖ້າຜູ້ທີ່ໄດ້ຮັບໂອນສິດ ຫາກເປັນຜູ້ແຈ້ງການໂອນສິດ ຜູ້ກ່ຽວຕ້ອງສົ່ງສຳເນົາແຈ້ງຮັບຮູ້ ກ່ຽວກັບໃບຢັ້ງຢືນການໂອນສິດ ດັ່ງກ່າວໃຫ້ຜູ້ໂອນສິດ.

ໃນກໍລະນີ ມີການໂອນກຳມະສິດຂອງນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວຂ້ອງກັບແບບອຸດສາຫະກຳ ຕ້ອງປະຕິບັດຕາມທີ່ກຳນົດໄວ້ໃນເອກະສານການໂອນສິດດັ່ງກ່າວ. ໃນກໍລະນີ ບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ, ການໂອນກຳມະສິດຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ຖືວ່າແມ່ນການໂອນສິດທັງໝົດ ຕໍ່ແບບອຸດສາຫະກຳ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວນັ້ນ.

ໃນກໍລະນີ ຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໃສ ກົມຊັບສິນທາງປັນຍາ ສາມາດແຈ້ງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ແຈ້ງການໂອນສິດນັ້ນສະໜອງຂໍ້ມູນ ຫຼື ເອກະສານເພີ່ມຕື່ມ.

### ມາດຕາ 29 ການອະນຸຍາດນຳໃຊ້

ເຈົ້າຂອງສິດຕໍ່ແບບອຸດສາຫະກຳ ສາມາດອະນຸຍາດໃຫ້ບຸກຄົນອື່ນ ນຳໃຊ້ແບບອຸດສາຫະກຳຂອງຕົນ ບາງສ່ວນ ຫຼື ທັງໝົດ ເພື່ອສະແຫວງຫາຜົນປະໂຫຍດຈາກສິດດັ່ງກ່າວ ຊຶ່ງສາມາດດຳເນີນການໂດຍການເຮັດສັນຍາການອະນຸຍາດນຳໃຊ້ ແຕ່ບໍ່ຖືເປັນການໂອນກຳມະສິດແບບອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂໍ້ທີ 2 ແລະ ຂໍ້ທີ 4 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຜູ້ອະນຸຍາດນຳໃຊ້ ຫຼື ຜູ້ໄດ້ຮັບອະນຸຍາດນຳໃຊ້ ຕ້ອງແຈ້ງຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອສົ່ງຕໍ່ກົມຊັບສິນທາງປັນຍາຊາບ ຕາມຂັ້ນຕອນດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ມີການໂອນກຳມະສິດ ຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນຳໃຊ້ແບບອຸດສາຫະກຳໃຫ້ຖືວ່າການອະນຸຍາດນຳໃຊ້ດັ່ງກ່າວ ຖືກໂອນພ້ອມກັບການໂອນກຳມະສິດຂອງນິຕິບຸກຄົນນັ້ນ ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ ຢູ່ໃນສັນຍາການອະນຸຍາດນຳໃຊ້ ຫຼື ໃນເອກະສານການໂອນກຳມະສິດດັ່ງກ່າວ.

ໃນກໍລະນີ ມີການໂອນກຳມະສິດ ຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນຳໃຊ້ແບບອຸດສາຫະກຳດັ່ງກ່າວ, ສັນຍາການອະນຸຍາດນຳໃຊ້ແບບອຸດສາຫະກຳໃຫ້ແກ່ບຸກຄົນອື່ນ ຈະບໍ່ຖືວ່າເປັນໂມຄະ ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນສັນຍາການອະນຸຍາດນຳໃຊ້.

## ໝວດທີ 4
## ການເປັນຜູ້ຕາງໜ້າໃນການຈົດທະບຽນແບບອຸດສາຫະກຳ ແລະ ດຳເນີນການອື່ນ

### ມາດຕາ 30 ການເປັນຜູ້ຕາງໜ້າໃນການຈົດທະບຽນແບບອຸດສາຫະກຳ ແລະ ດຳເນີນການອື່ນ

ບຸກຄົນທີ່ມີສິດຕາງໜ້າ ໃນການດຳເນີນການຈົດທະບຽນແບບອຸດສາຫະກຳ ແລະ ດຳເນີນການອື່ນ ມີດັ່ງນີ້:

1. ບຸກຄົນໃດໜຶ່ງທີ່ໄດ້ຮ່ວມອອກແບບ ແລະ ຖືກແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າ ໃນກໍລະນີອອກແບບ ຮ່ວມກັນຫຼາຍຄົນ. ໃບມອບສິດຕ້ອງມີລາຍເຊັນຂອງໝົດທຸກຄົນ ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງ ຫາກເສຍຊີວິດ;
2. ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍ ຢູ່ ສປປ ລາວ;
3. ບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
4. ພະນັກງານ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ພົນລະເມືອງລາວທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສຳລັບຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຜ່ານບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຫຼື ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ ເທົ່ານັ້ນ.

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດ ທີ່ເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫຼື ຜູ້ມອບສິດ. ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ຫາກຂັດກັບກົດໝາຍ ຫຼື ລະບຽບການ.

**ມາດຕາ 31 ການມອບສິດໃຫ້ເປັນຜູ້ຕາງໜ້າ**

ການມອບສິດໃຫ້ເປັນຜູ້ຕາງໜ້າ ຕ້ອງກຳນົດດັ່ງລຸ່ມນີ້:

1. ເງື່ອນໄຂ ແລະ ຂອບເຂດ ຂອງການເປັນຜູ້ຕາງໜ້າ;

2. ສິດທີ່ຖືກມອບໝາຍ ໃຫ້ດຳເນີນການໃດໜຶ່ງ ທີ່ກ່ຽວຂ້ອງຢູ່ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;

3. ໄລຍະເວລາ (ຖ້າມີ).

4. ຜູ້ມອບສິດສາມາດຍົກເລີກໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າ ໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆ ທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ.

ໃບມອບສິດໜຶ່ງຕ້ອງນຳໃຊ້ສະເພາະແຕ່ຄຳຮ້ອງດຽວເທົ່ານັ້ນ ຊຶ່ງຕ້ອງລະບຸຫົວຂໍ້ຂອງແບບອຸດສາຫະກຳທີ່ກ່ຽວຂ້ອງ.

ໃນກໍລະນີໃບມອບສິດບໍ່ໄດ້ກຳນົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດຳເນີນການອື່ນ ທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດ ຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວ ຫຼື ການດຳເນີນການອື່ນ ຫາກສຳເລັດແລ້ວ, ແຕ່ບໍ່ເກີນໄລຍະເວລາ ສາມ ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ໃນກໍລະນີ ຜູ້ອອກໃບມອບສິດເປັນ ນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສິດຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອຳນາດຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ ດັ່ງກ່າວ.

ໃນກໍລະນີ ຜູ້ອອກແບບຮ່ວມກັນຫຼາຍຄົນ ຫາກມີຜູ້ໃດຜູ້ໜຶ່ງປະຕິເສດບໍ່ລົງລາຍເຊັນໃນໜັງສືຢັ້ງຢືນກ່ຽວກັບການຖືສິດ ເພື່ອດຳເນີນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຖືວ່າໃບມອບສິດດັ່ງກ່າວ ບໍ່ມີຜົນບັງຄັບໃຊ້.

## ໝວດທີ 5
## ການສ້າງສຳນວນເອກະສານຂຶ້ນໃໝ່

**ມາດຕາ 32 ສຳນວນເອກະສານເສຍຫາຍ ຫຼື ສູນຫາຍ**

ໃນກໍລະນີ ສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຈົດທະບຽນແບບອຸດສາຫະກຳ ຫາກເກີດມີ ການເສຍຫາຍ ຫຼື ສູນຫາຍ ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານດັ່ງກ່າວຂຶ້ນມາໃໝ່.

**ມາດຕາ 33 ການສ້າງສຳນວນເອກະສານຂຶ້ນໃໝ່**

ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານ, ເອກະສານອື່ນທີ່ເສຍຫາຍ ຫຼື ສູນຫາຍນັ້ນຂຶ້ນໃໝ່ ຖ້າສຳນວນເອກະສານ ຫຼື ເອກະສານອື່ນທີ່ພົວພັນເຖິງຄຳຮ້ອງ ແລະ ການດຳເນີນການອື່ນຫາກເສຍຫາຍ ຫຼື ສູນຫາຍ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງ ຫຼື ເຈົ້າຂອງສຳນວນເອກະສານ ສົ່ງສຳເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ພ້ອມທັງ ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງສຳເນົາດັ່ງກ່າວ ລວມທັງເອກະສານ ຫຼື ສຳນວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

## ໝວດທີ 6
## ການຄຸ້ມຄອງ ວຽກງານແບບອຸດສາຫະກຳ

**ມາດຕາ 34 ການຄຸ້ມຄອງວຽກງານແບບອຸດສາຫະກຳ**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານການຈົດທະບຽນແບບອຸດສາຫະກຳ ປະກອບມີ ສອງຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມຊັບສິນທາງປັນຍາ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການຄຸ້ມຄອງວຽກງານແບບອຸດສາຫະກຳ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່ແນະນຳຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານແບບອຸດສາຫະກຳ;
3. ພິຈາລະນາ ສຳນວນຄຳຮ້ອງຂໍຈົດທະບຽນ, ຕໍ່ອາຍຸ, ປ່ຽນຊື່ ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ ແລະ ການສະເໜີອື່ນ ກ່ຽວກັບແບບອຸດສາຫະກຳ;
4. ອອກໃບຢັ້ງຢືນຈົດທະບຽນ, ແຈ້ງປະຕິເສດ, ຍົກເລີກ ຫຼື ລົບລ້າງ ແລະ ອື່ນໆ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;
5. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບແບບອຸດສາຫະກຳ
6. ໃຫ້ບໍລິການ ການກວດຄົ້ນແບບອຸດສາຫະກຳໃນລະບົບຖານຂໍ້ມູນຊັບສິນທາງປັນຍາຂອງກົມຊັບສິນທາງປັນຍາ;
7. ຄົ້ນຄວ້າ ແລະ ພິຈາລະນາ ຄຳຊີ້ແຈງຕໍ່ການແຈ້ງປະຕິເສດ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;
8. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ;
9. ຊຸກຍູ້ ແລະ ສົ່ງເສີມ ວຽກງານການຈົດທະບຽນແບບອຸດສາຫະກຳ
10. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 36 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ນິຕິກຳ ກ່ຽວກັບວຽກງານແບບອຸດສາຫະກຳ;

2. ຮັບ ຄຳຮ້ອງ ແລະ ຄຳສະເໜີອື່ນ ກ່ຽວກັບແບບອຸດສາຫະກຳ, ກວດຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕາມເງື່ອນໄຂຕໍ່າສຸດ;

3. ນຳສົ່ງສຳນວນຄຳຮ້ອງ, ຄ່າທຳນຽມ ແລະ ຄ່າບໍລິການໃຫ້ກົມຊັບສິນທາງປັນຍາ;

4. ມອບໝາຍຄວາມຮັບຜິດຊອບໃຫ້ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມຄວາມເໝາະສົມ;

5. ຊຸກຍູ້ ແລະ ສົ່ງເສີມ ວຽກງານການຈົດທະບຽນແບບອຸດສາຫະກຳ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ ໃຫ້ກົມຊັບສິນທາງປັນຍາ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຊັບສິນທາງປັນຍາ ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 38 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍແບບອຸດສາຫະກຳ, ສະບັບເລກທີ 0035/ກວຕ, ລົງວັນທີ 20 ມັງກອນ 2021. ຊ

**ລັດຖະມົນຕີ**

ມະໄລທອງ ກົມມະສິດ